ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການນຳເຂົ້າ ແລະ ສົ່ງອອກ

ເລກທີ 2009/ກຂອ

ນະຄອນຫຼວງວຽງຈັນ, ວັນທີ 14 ມິຖຸນາ 2021

# ແຈ້ງການ

**ເຖິງ:** ບັນດາຜູ້ປະກອບການນຳເຂົ້າຍານພາຫະນະ

**ເລື່ອງ:** ມາດຕະການຊົ່ວຄາວໃນການການນຳເຂົ້າຍານພາຫະນະກົນຈັກໜັກສະເພາະ

- ອີງໃສ່ ແຈ້ງການ ຂອງ ກົມຂົນສົ່ງ ເລກທີ 10649 /ຍທຂ.ກຂ, ລົງວັນທີ 7 ມິຖຸນາ 2021

ກົມການນຳເຂົ້າ ແລະ ສົ່ງອອກ ຂໍຖືເປັນກຽດແຈ້ງ ມາຍັງ ທ່ານ ເພື່ອຊາບວ່າ: ເນື່ອງຈາກມີປະກົດການປົດເປືອນຂໍ້ມູນສະພາບເຕັກນິກ (ຈາກລົດເກົ່າ ມາເປັນລົດໃໝ່) ແລະ ນຳໃຊ້ເລກຈັກ, ເລກຖັງ ຂອງ ຍານພາຫະນະກົນຈັກໜັກສະເພາະທີ່ເປັນປະເພດລົດຂົນສົ່ງ ທີ່ນຳເຂົ້າ ແລະ ຂຶ້ນທະບຽນແລ້ວ ມາສັບໃສ່ລົດທີ່ນຳເຂົ້າມາໃໝ່ ເພື່ອແຈ້ງຂໍອະນຸຍາດນຳເຂົ້ານຳບັນດາໜ່ວຍງານທີ່ກ່ຽວຂ້ອງຂອງລັດ ພາໃຫ້ເກີດບັນຫາ ເລກຈັກ, ເລກຖັງ ຊໍ້າຊ້ອນ. ເພື່ອເປັນການສະກັດກັ້ນປະກົດການດັ່ງກ່າວ ໃນໄລຍະລໍຖ້າການປັບປຸງລະບົບແຈ້ງພາສີປະຕູດຽວແຫ່ງຊາດ (LNSW) ໃຫ້ສາມາດເຊື່ອມຈອດ, ກວດສອບຂໍ້ມູນການຂຶ້ນທະບຽນຍານພາຫະນະຂອງກົມຂົນສົ່ງ ແລະ ສາມາດຂະຫຍາຍການນຳໃຊ້ອອກໄປສູ່ດ່ານພາສີອື່ນໃນຂອບເຂດທົ່ວປະເທດ, ກົມການນຳເຂົ້າ ແລະ ສົ່ງອອກ ຈຶ່ງແຈ້ງມາດຕະການຊົ່ວຄາວໃນການນຳເຂົ້າລົດປະເພດດັ່ງກ່າວ ມາຍັງ ທ່ານ ເພື່ອປະຕິບັດດັ່ງນີ້:

1. ຜູ້ນຳເຂົ້າ ທີ່ມີຄວາມປະສົງຢາກນຳເຂົ້າ ລົດກົນຈັກໜັກສະເພາະທີ່ເປັນປະເພດລົດຂົນສົ່ງ ຕາມທີ່ໄດ້ກຳນົດໄວ້ໃນບົດແນະນຳຂອງກົມຂົນສົ່ງ ສະບັບເລກທີ 13997/ກຂສ, ລົງວັນທີ 23 ສິງຫາ 2012 ຕ້ອງໄດ້ຍື່ນຂໍໃບອະນຸຍາດດ້ານເຕັກນິກນຳພາຫະນະກົນຈັກເຂົ້າ ແລະ ຂຶ້ນທະບຽນ ຢູ່ ສປປ ລາວ ນຳ ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອກວດກາ ແລະ ຢັ້ງຢືນວ່າຍານພາຫະນະດັ່ງກ່າວຍັງບໍ່ເຄີຍຜ່ານການຂຶ້ນທະບຽນ ຢູ່ ສປປ ລາວ ມາກ່ອນ, ຫຼັງຈາກນັ້ນ, ຈຶ່ງປະກອບເອກະສານເພື່ອຂໍໃບອະນຸຍາດນຳເຂົ້ານຳ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ແລ້ວຈຶ່ງໄປແຈ້ງເສຍພາສີ ຕາມລະບຽບການ

2. ການນຳເຂົ້າຍານພາຫະນະທຸກປະເພດທີ່ເປັນລົດນຳໃຊ້ແລ້ວຈາກຕ່າງປະເທດ ເພື່ອມາປ່ຽນປ້າຍນຳໃຊ້ຢູ່ ສປປ ລາວ, ຜູ້ນຳເຂົ້າ ຕ້ອງຄັດຕິດໃບລົບລ້າງປ້າຍທະບຽນຈາກປະເທດຕົ້ນທາງ ມາພ້ອມທຸກຄັ້ງ ຈຶ່ງຈະໄດ້ຮັບພິຈາລະນາ.

3. ເອກະສານທີ່ນຳໃຊ້ປະກອບໃນການຂໍໃບອະນຸຍາດນຳເຂົ້າ ໂດຍສະເພາະ ໃບແຈ້ງລາຄາ (Invoice), ໃບແຈ້ງຂໍ້ມູນສິນຄ້າ (Packing) ຫຼື ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ໃບ CO) ຕ້ອງແມ່ນເອກະສານຢັ້ງຢືນທີ່ອອກໃຫ້ໂດຍບໍລິສັດ/ໂຮງງານ ຫຼື ໜ່ວຍງານ ທີ່ມີຕົວຕົນ ແລະ ສາມາດກວດສອບໄດ້. **ກົມການນຳເຂົ້າ ແລະ ສົ່ງອອກ ຈະປະຕິເສດການອອກໃບອະນຸຍາດນຳເຂົ້າ ຖ້າຫາກບໍ່ສາມາດຢັ້ງຢືນຄວາມຖືກຕ້ອງຂອງເອກະສານດັ່ງກ່າວໄດ້.**

4. ໃຫ້ ບັນດາບໍລິສັດນຳເຂົ້າ ແລະ ສົ່ງອອກ ພາຫະນະ **ທີ່ໄດ້ຮັບອະນຸຍາດດຳເນີນກິດຈະການກ່ອນປີ 2021** ຮີບຮ້ອນແຈ້ງຄືນ ເອກະສານ/ໜັງສື ແຕ່ງຕັ້ງ ຫຼື ມອບສິດເປັນຕົວແທນຈຳໜ່າຍຍານພາຫະນະ ໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ **<u>ຊ້າສຸດບໍ່ໃຫ້ກາຍວັນທີ 30 ມິຖຸນາ 2021</u>**. ຖ້າຮອດກຳນົດເວລາດັ່ງກ່າວແລ້ວແຕ່ບໍລິສັດຍັງບໍ່ປະກອບເອກະສານມາໃຫ້, ກົມການນຳເຂົ້າ ແລະ ສົ່ງອອກ ຈະໄດ້ໂຈະການດຳເນີນກິດຈະການ ແລະ ການອອກໃບອະນຸຍາດນຳເຂົ້າໄວ້ຊົ່ວຄາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ປະຕິບັດຕາມນີ້ດ້ວຍ.

ລ/ຍ. ຫົວໜ້າກົມ,

**ພຸດສະຫວັນ ຊຸນຈັນທະ**

**<u>ສຳເນົານຳສົ່ງ</u>**

- ກົມຂົນສົ່ງ ເພື່ອເປັນບ່ອນອີງ
- ກົມພາສີ ເພື່ອເປັນບ່ອນອີງ

**<u>ສອບຖາມຂໍ້ມູນເພີ່ມເຕີມ</u>**

ພະແນກບໍລິຫານການນຳເຂົ້າ ແລະ ສົ່ງອອກ
021 412008